ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 38 03 --/ຜ-ຟຜລ

ນະຄອນຫຼວງວຽງຈັນ, ວັນທີ 05 DEC 2023

# ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຜລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສໍາລັບ ວຽກຈັດຊື້ເຄື່ອງແບບ, ແພຕັດເສື້ອ ແລະ ແພຕັດໂສ້ງ ພະນັກງານ ຂອງ ຜ-ຟຜລ ປະຈໍາປີ 2024.

ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຜລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຜລ, ສະບັບປັບປຸງໃໝ່ ລົງວັນທີ 30/12/2022.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຜລ, ຝ່າຍບໍລິຫານງານສະໜັບສະໜູນອົງກອນ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 11 DEC 2023 ຈົນເຖິງວັນທີ 04 JAN 2024, ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສໍານັກງານຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຜລ, ເລີ່ມແຕ່ວັນທີ 11 DEC 2023 ເຖິງວັນທີ 04 JAN 2024, ໃນລາຄາ 250.000 (ສອງແສນຫ້າສິບພັນ) ກີບ/ຊຸດ, ວິທີການຊໍາລະຕ້ອງເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວ ຜ-ຟຜລ ຈະບໍ່ມີການສົ່ງຄືນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຜລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ, ວັນທີ 10 JAN 2024 . ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກໍານົດໄວ້, ຜ-ຟຜລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 10 JAN 2024 ໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ຜ-ຟຜລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

**ຜູ້ອໍານວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ວົງສະກຸນ ຍົ່ງຍົງ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ໌: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la